**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 25030 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 8.12.2021

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການດັດສົມທຸລະກິດ ນ້ຳປະປາ ແລະ ສຸຂາພິບານ

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ;
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 191/ນຍ, ລົງວັນທີ 01 ກໍລະກົດ 2005 ວ່າດ້ວຍ ການດັດສົມທຸລະກິດນ້ຳປະປາ;
- ອີງຕາມ ໜັງສະເໜີ ຂອງ ກົມນ້ຳປະປາ ສະບັບເລກທີ 22757/ຍທຂ.ກນປ, ລົງວັນທີ 10/11/2021.

**ລັດຖະມົນຕີ ຕົກລົງ:**

**ມາດຕາ 1:** ແຕ່ງຕັ້ງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ແລະ ສຸຂາພິບານ ເຊິ່ງປະກອບດ້ວຍ 13 ທ່ານ ດັ່ງລຸ່ມນີ້:

| | | |
|---|---|---|
| 1. ທ່ານ ນ. ວິໄລຄຳ ໂພສາລາດ | ຮອງລັດຖະມົນຕີ, ກະຊວງ ໂຍທາທິການ ແລະ ຂົນສົ່ງ | ເປັນປະທານ |
| 2. ທ່ານ ສົມປອງ ສິດທິວົງ | ຫົວໜ້າກົມນ້ຳປະປາ, ກະຊວງ ໂຍທາທິການ ແລະ ຂົນສົ່ງ | ເປັນຮອງປະທານ |
| 3. ທ່ານ ປະສົມເພັດ ຄຳຕັນ | ຮອງຫົວໜ້າກົມຄຸ້ມຄອງ, ວິສາຫະກິດ ລັດລົງທຶນ ແລະ ການປະກັນໄພ, ກະຊວງ ການເງິນ | ເປັນຄະນະ |
| 4. ທ່ານ ຈັນຊະນະ ສີຈັນທອງທິບ | ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ | ເປັນຄະນະ |
| 5. ທ່ານ ນ. ຖະໜອມ ແກ້ວໄຊຍະຈັກ | ຮອງຫົວໜ້າກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ | ເປັນຄະນະ |
| 6. ທ່ານ ດຣ ບົວແກ້ວ ສຸວັນທອງ | ຮອງຫົວໜ້າກົມອະນາໄມ ແລະ ສົ່ງເສີມ ສຸຂະພາບ, ກະຊວງ ສາທາລະນະສຸກ | ເປັນຄະນະ |
| 7. ທ່ານ ນ. ສອນນາລີ ພານຸວົງ | ຮອງຫົວໜ້າກົມພັດທະນາແມ່ຍິງ, ຄະນະ ບໍລິຫານງານສູນກາງສະຫະພັນແມ່ຍິງລາວ | ເປັນຄະນະ |

8. ທ່ານ ພອນໄຊ ສີມມາລາວົງ | ຮອງຫົວໜ້າກົມຊັບພະຍາກອນນໍ້າ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | ເປັນຄະນະ

9. ທ່ານ ພູໄຊ ເທບພະວົງ | ເລຂາທິການສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ | ເປັນຄະນະ

10. ທ່ານ ສະເຫຼີມສັກ ໄຊຍະມຸງຄຸນ | ຮອງຫົວໜ້າກົມນໍ້າປະປາ, ກະຊວງ ໂຍທາທິການ ແລະ ຂົນສົ່ງ | ເປັນຄະນະ ທັງເປັນຫົວໜ້າກອງເລຂາ

11. ທ່ານ ຄຳພູວົງ ສີໂຄລົມ | ຫົວໜ້າພະແນກດັດສົມທຸລະກິດນໍ້າປະປາ, ກົມນໍ້າປະປາ, ກະຊວງ ໂຍທາທິການ ແລະ ຂົນສົ່ງ | ເປັນຄະນະ ທັງເປັນຮອງຫົວໜ້າກອງເລຂາ

12. ທ່ານ ໄຊຊະນະ ຊາພັກດີ | ຫົວໜ້າພະແນກສຸຂາພິບານ, ກົມນໍ້າປະປາ, ກະຊວງ ໂຍທາທິການ ແລະ ຂົນສົ່ງ | ເປັນຄະນະກອງເລຂາ

13. ທ່ານ ສີພັນ ອິນເມືອງໄຊ | ຮອງຜູ້ອຳນວຍການລັດວິສາຫະກິດນໍ້າປະປານະຄອນຫຼວງວຽງຈັນ, ຜູ້ອຳນວຍການສະມາຄົມນໍ້າປະປາລາວ | ເປັນຄະນະກອງເລຂາ

**ມາດຕາ 2:** ຄະນະກຳມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ແມ່ນການຈັດຕັ້ງທີ່ບໍ່ປະຈຳການ; ກອງເລຂາຂອງຄະນະກຳມະການດັ່ງກ່າວ ແມ່ນພະແນກດັດສົມທຸລະກິດນໍ້າປະປາ, ກົມນໍ້າປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 3:** ຄະນະກຳມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ກຳນົດ ນະໂຍບາຍ ແລະ ຊີ້ນຳລວມ ກ່ຽວກັບ ການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ໂດຍອີງໃສ່ ນະໂຍບາຍແຫ່ງຊາດ ວ່າດ້ວຍ ນໍ້າ, ສຸຂາພິບານ ແລະ ອະນາໄມ;
2. ພິຈາລະນາ ແລະ ໃຫ້ການຮັບຮອງເອົາແຜນການດັດສົມ ທີ່ກົມນໍ້າປະປາ ສ້າງຂຶ້ນ ລວມທັງ ແຜນດຳເນີນງານ, ການນຳໃຊ້ພະນັກງານ, ການຝຶກອົບຮົມ, ງົບປະມານ ແລະ ແຜນການເງິນ ກ່ອນນຳສະເໜີໃຫ້ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອພິຈາລະນາ ຮັບຮອງເອົາ;
3. ພິຈາລະນາຮັບຮອງເອົາບົດແນະນຳຕ່າງໆ, ລະບຽບການ, ມາດຕະຖານສົມທຽບ ແລະ ຕົວຊີ້ວັດ ກ່ຽວກັບ ຜົນການປະຕິບັດງານ ທີ່ພົວພັນເຖິງບັນດາກິດຈະກຳດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ທີ່ກົມນໍ້າປະປາສ້າງຂຶ້ນ;
4. ຊີ້ນຳ, ຕິດຕາມກວດກາ ແລະ ຄວບຄຸມ ການເຄື່ອນໄຫວວຽກງານດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ຂອງ ກົມນໍ້າປະປາ.

**ມາດຕາ 4:** ຄະນະກຳມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ຕ້ອງປະຊຸມກັນ ຢ່າງໜ້ອຍ 1 ເທື່ອຕໍ່ປີ ແລະ ຕາມຄວາມຈຳເປັນ; ກອງປະຊຸມແຕ່ລະຄັ້ງຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີ ຜູ້ເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຄະນະກຳມະການທັງໝົດ; ການຕັດສິນຂອງຄະນະກຳມະການດັ່ງກ່າວ ແມ່ນອີງໃສ່ສຽງສ່ວນຫຼາຍ ແລະ ໃນກໍລະນີທີ່ມີສຽງສະເໝີກັນ ປະທານເປັນຜູ້ຕັດສິນ.

**ມາດຕາ 5:** ກອງເລຂາຄະນະກຳມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ມີໜ້າທີ່ປະສານງານ, ສະຫຼຸບລາຍງານວຽກງານດັດສົມທີ່ຜ່ານມາ, ສ້າງແຜນຈັດກອງປະຊຸມ ຂອງຄະນະກຳມະການ

ດັ່ງກ່າວ; ກະກຽມກອງປະຊຸມແຕ່ລະຄັ້ງ ດ້ວຍການກໍານົດ ວາລະ, ຈຸດປະສົງ, ເນື້ອໃນ ແລະ ຜົນທີ່ຄາດວ່າຈະໄດ້ຮັບ; ຮັບປະກັນໃຫ້ກອງປະຊຸມ ແຕ່ລະຄັ້ງດໍາເນີນໄປຢ່າງມີປະສິດທິຜົນ.

**ມາດຕາ 6:** ກົມນໍ້າປະປາ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ພົວພັນເຖິງ ການຈັດກອງປະຊຸມຂອງ ຄະນະກໍາມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ແຕ່ລະຄັ້ງ.

**ມາດຕາ 7:** ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງອໍານວຍຄວາມສະດວກ ໃຫ້ແກ່ຜູ້ຖືກແຕ່ງຕັ້ງ ເພື່ອປະຕິບັດວຽກງານໃຫ້ສໍາເລັດຜົນ ເປັນຢ່າງດີ.

**ມາດຕາ 8:** ຂໍ້ຕົກລົງສະບັບນີ້ ມີຜົນນໍາໃຊ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 9199/ຍທຂ, ລົງວັນທີ 11 ມິຖຸນາ 2012.

**ລັດຖະມົນຕີ**

ວຽງສະຫວັດ ສີພັນດອນ